# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 26 ສິງຫາ 2007 (8-26-2007)

---

## <u>ໃນເມື່ອສັງຄົມປະລະທາງຂອງພຣະເຈົ້າ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 2 ກະສັດ 22:1-5,23:2-4,24,26-27

**<u>ຄຳຖາມຊີວິດ:</u>** ເຮັດແນວໃດຄົນຂອງພຣະເຈົ້າຈະປ່ຽນສັງຄົມທີ່ບໍ່ເອົາພຣະເຈົ້າ?

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ພຣະເຈົ້າສາມາດປ່ຽນສະພາບຂອງສັງຄົມໄດ້ໃນເມື່ອຄົນຂອງພຣະເຈົ້າເອົາພຣະຄຳຂອງພຣະອົງມາໃຊ້.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂຶ້ນມາເພື່ອຊ່ອຍທ່ານໃຫ້ຊອກຫາການຊ່ອຍເຫລືອຈາກພຣະເຈົ້າໃນເມື່ອປະສົບກັບສະພາບການຢ່າງໜັງໜ່ວງ:

- ເຫັນວ່າສັງຄົມຂອງພວກເຮົາໄດ້ອຽງໄປທາງຝ່າຍໂລກ.
- ຕັດສິນໃຈເຮັດອັນໃດອັນນຶ່ງເພື່ອສົ່ງເສີມສິ່ງທີ່ພຣະເຈົ້າໃຫ້ກຽດ.

ສາສນາທູດຄົນນຶ່ງໄດ້ຢູ່ໃນສະພາບທີ່ຕັດສິນໃຈຍາກ. ຕຳຣວດໃນປະເທດທີ່ເຄີຍເປັນລະບອບສັງຄົມນິຍົມໄດ້ຈູດຣົດລາວໂດຍຫາເຣື່ອງບໍ່ມີຄວາມຈິງໃສ່. ຕຳຣວດບອກວ່າໃຫ້ຈ່າຍຄ່າປັບໄໝໃຫ້ພວກເຂົາໂລດແທນທີ່ຈະໄປຈ່າຍທີ່ຄ້າຍຕຳຣວດ. ການຈ່າຍສິນບົນກ້ອງໂຕະກາຍເປັນທຳນຽມຂອງສັງຄົມແລະເຮັດໃຫ້ມີການສໍ້ຣາດບັງຫລວງເກີດຂຶ້ນ. ສາສນາທູດຮູ້ວ່າຖ້າໄປຈ່າຍທີ່ຄ້າຍ ລາວອາດຖືກກັກໄວ້ໃນຄຸກເພື່ອຂຶ້ນສານ. ແຕ່ຖ້າລາວຈ່າຍກ້ອງໂຕະລາວກໍເປັນຄົນຊ່ວຍໃຫ້ສັງຄົມເປື່ອຍເຍື່ອຍໄປອີກ. ລາວໄດ້ຢຸດອະທິຖານຕໍ່ພຣະເຈົ້າທາງຂ້າງຣົດວ່າຈະເຮັດຢ່າງໃດ. ລາວໄດ້ບອກຕຳຣວດວ່າ ລາວເອງບໍ່ສາມາດຈ່າຍທີ່ນັ້ນເພາະລາວເປັນຄົນທີ່ບໍ່ມີຄວາມຜິດຫຍັງ. ພຣະເຈົ້າໄດ້ປະທານພຣະຄຸນຕໍ່ລາວໃນເວລານັ້ນ ທີ່ສຸດຜູ້ເປັນຕຳຣວດກໍຍ່າງໜີອອກໄປປະໃຫ້ລາວຂັບຣົດຕໍ່ໄປ. ບັນຫາຂອງການສໍ້ຣາດ ນີ້ບໍ່ໄດ້ເກີດຂຶ້ນໃນຕ່າງປະເທດ ແຕ່ຍັງໄດ້ເກີດຂຶ້ນໃນປະເທດຂອງພວກເຮົານີ້ຄືກັນ. ຄຣິສຕຽນຄົນອະເມຣິກາຫລາຍຄົນເປັນຫ່ວງຕໍ່ສະພາບສັງຄົມທີ່ອຽງໄປໃນທາງຝ່າຍໂລກ. ພວກເຮົາຮູ້ບໍ່ສະບາຍໃຈ ແລະເຈັບປວດທີ່ສັງຄົມຂອງເຮົາໄດ້ກາຍເປັນເຊັ່ນນີ້. ພວກເຮົາມີຄວາມຫວັງບໍ່ວ່າຈະປ່ຽນສະພາບສັງຄົມນີ້ໄດ້? ພວກເຮົາຈະເຫັນຄຳຕອບໂດຍການສຶກສາເບິ່ງການຟື້ນຟູເກີດຶ້ນທີ່ກຸງເຢຣູຊາເລັມໃນຣາຊການຂອງກະສັດໂຢຊີອາ.

## <u>ສຶກສາພຣະຄັມພີ</u>

### 1. <u>ປາຖນາຄວາມທ່ຽງທັມ</u> (2 ກະສັດ 22:1-5)

ທ່ານໄດ້ເລີ້ມຕົ້ນໃນວັນນີ້ໂດຍອ່ານໜັງສືພິມບໍ່? ທ່ານໄດ້ກ່າວໂທດຕໍ່ຣັຖບານ, ດາຣາໜັງ, ຫລືຄົນໃດຄົນນຶ່ງເຖິງບັນຫາທີ່ທ່ານໄດ້ເຫັນຢູ່ນັ້ນບໍ່? ຄວາມຈິງ ພວກເຮົາທຸກໆຄົນມີໜ້າທີ່ຮັບຜິດຊອບຕໍ່ຝ່າຍວິນຍານຈິດໃນປະເທດຂອງພວກເຮົາ. ພວກເຮົາຕ້ອງການອັນໃດກໍໄດ້ອັນນັ້ນ. ໃຫ້ພວກເຮົາພິຈາຣະນາເບິ່ງສະພາບຂອງ **ໂຢຊີອາ** ຜູ້ເປັນ **ກະສັດ** ປົກຄອງເມືອງຢູດາ ເວລານັ້ນເພິ່ນມີອາຍຸພຽງ **8 ປີເທົ່ານັ້ນ**. ເວລາເພິ່ນມີອາຍຸ 16 ປີ ເພິ່ນໄດ້ຊອກສແວງຫາພຣະເຈົ້າ ( 2 ຂ່າວຄາວ 34:3). ໃນເວລາເພິ່ນມີອາຍຸແກ່ມາເພິ່ນໄດ້ນຳພາຄົນກັບຄືນມາຫາພຣະເຈົ້າ.

ການທີ່ສຶກສາພຣະຄັມພີຕອນນີ້ໄດ້ບອກເຖິງຄວາມຕ້ອງການຂອງ ໂຢຊີອາ ຄືຄວາມທ່ຽງທັມໃນສາມປະເດັນ. **ນຶ່ງ**, ເພິ່ນບໍ່ໄດ້ປົກຄອງເປັນເວລາ 31 ປີ ເພາະຟັງສຽງສ່ວນຫລາຍ. ໂຢຊີອາ **ເປັນຫ່ວງນຳແຕ່ສິ່ງທີ່ຖືກຕ້ອງຕາມສາຍພຣະເນດຂອງພຣະເຈົ້າ**. **ສອງ**, ເພິ່ນໄດ້ເລືອກເອົາການເປັນຕົວຢ່າງທີ່ດີສຳລັບພຣະເຈົ້າ. **ເພິ່ນໄດ້ຍ່າງໄປໃນຫົນທາງຂອງບັນພະບຸຣຸດ ດາວິດ**. **ສາມ**, ເພິ່ນໄດ້ຕັດສິນໃຈຢ່າງສະເໝີສເມີໄປ. **ເພິ່ນບໍ່ໄດ້ຫລຽວຊ້າຍຫລຽວຂວາ.** ຕົວຢ່າງ: ໂຢຊີອາ ໄດ້ມີການປະຕິຮູບຂຶ້ນໃນ**ປີທີ 18** ທີ່ເພິ່ນໄດ້ປົກຄອງເມືອງຢູດາ. ເພິ່ນເລີ້ມຕົ້ນດ້ວຍການສ້ອມແປງພຣະວິຫານຂອງພຣະເຈົ້າດ້ວຍການສົ່ງເລຂາສານໄປຫາພວກມະຫາປະໂລຫິດ ເພື່ອຢາກຮູ້ຈັກວ່າເງິນ**ທີ່ເກັບຈາກຄົນ**ທີ່ເຂົ້າໄປຖວາຍໃນພຣະວິຫານນັ້ນໄດ້ເທົ່າໃດ. ບົດນີ້ບໍ່ໄດ້ບອກວ່າພວກມະຫາປະໂລຫິດໃຊ້ເງິນໃນທາງຜິດ. ໂຢຊີອາ ໄດ້ສັ່ງໃຫ້ສົ່ງເງິນທີ່ເກັບໄດ້ໄປໃຫ້ຄົນງານເພື່ອຈະ**ສ້ອມແປງ**ທີ່ຜູ້ນຳຄົນກ່ອນບໍ່ເອົາຫົວຊາ.

ໂຢຊີອາ ໄດ້ເລີ້ມປະຕິຮູບເວລາເພິ່ນໄດ້ສັ່ງໃຫ້ມ້າງແທນບູຊາຕ່າງໆຂອງພຣະປອມພາຍໃນປະເທດ (2 ຂ່າວຄາວ 34:3). ໂຢຊີອາ ຢູ່ກັບສະພາບການເມືອງທັງພາຍໃນແລະພາຍນອກ ແລະກໍມີອາຍຸອ່ອນ ຂາດປະສົບການ, ແຕ່ຮັບຮູ້ວ່າ ໂຢຊີອາ ມີຄວາມປະສົງຢາກເຫັນຄວາມທ່ຽງທັມເກີດຂຶ້ນໄວ້ເທົ່າໃດຍິ່ງດີ. ເໝືອນ ໂຢຊີອາ ຜູ້ຕ້ອງມີຄວາມປາຖນາຢາກເຫັນຄວາມທ່ຽງທັມນັ້ນ ຈະບໍ່ມີຄວາມພໍໃຈກັບສະພາບຢູ່ເໝືອນເດີມ. ພວກເຂົາສະແຫວງຫາສິ່ງທີ່ໃຫ້ກຽດແດ່ພຣະ ເຈົ້າ.

## 2. <u>ຍົກພຣະຄຳຂອງພຣະເຈົ້າໄວ້ສູງ</u> (2 ກະສັດ 22:2-3)

ໃນລະຍະບູຣະນະສ້ອມແປງພຣະວິຫານ, ໄດ້ຄົ້ນພົບປື້ມພຣະບັນຍັດ. ພວກນັກປາດຫລາຍໆຄົນໄດ້ກ່າວວ່າປື້ມນັ້ນເປັນພາກສ່ວນຂອງປື້ມພຣະບັດຍັດທີສອງ. ພິຈາຣະນາເບິ່ງດູວ່າຖ້າປື້ມນີ້ເສັຽໄປເລີຍ. **ນຶ່ງ**, ອາດຈະສືບຕໍ່ແຕ່ບໍ່ມີພຣະດຳຣັດຂອງພຣະເຈົ້າ. ພວກເຮົາຕ້ອງພາກັນລະວັງບໍ່ຄວນເອົາກິຈະກັມຂອງສາສນາເຂົ້າມາແທນຄວາມສຳພັນຂອງພຣະຄັມພີ. **ສອງ**, ເອົາພິທີເຂົ້າມາແທນຄວາມຮັບຜິດຊອບຂອງພວກປະໂລຫິດທີ່ກ່ຽວພັນກັບພຣະເຈົ້າ. **ສາມ**, ບໍ່ມີຜູ້ໃດຄິດເຖິງພຣະເຈົ້າ. ປາກົດວ່າ ພວກປະໂລຫິດບໍ່ເອົາຫົວຊ້າກັບພຣະຄຳ, ຕໍ່ມາພວກເຂົາກໍອາດບໍ່ຮູ້ສຶກເລີຍວ່າພຣະບັນຍັດໄດ້ສູນຫາຍໄປ. ພວກເຮົາບໍ່ສົມຄວນທີ່ຈະໃຫ້ພຣະຄຳຂອງພຣະເຈົ້າສູນເສັຽໄປໃນຄຣິສຕະຈັກ ແລະໃນຊີວິດຂອງພວກເຮົາ. ໂຢຊີອາ ບໍ່ໄດ້ຫລົງລືມ ແຕ່ເພິ່ນໄດ້ຍົກພຣະຄຳຂຶ້ນສູງ.

**ນຶ່ງ**, ເພິ່ນເຊື່ອວ່າພຣະຄຳນັ້ນເປັນສິ່ງສຳຄັນຫລາຍຕໍ່ປະເທດຊາດທຸກໆຄົນຈາກ**ຄົນໝຸ່ມນ້ອຍຈົນເຖິງຄົນແກ່ຊະຣາ**ຄວນໄດ້ຍິນ. ໂຢຊີອາ **ເຂົ້າໄປໃນພຣະວິຫານຂອງພຣະເຈົ້າ**, ເພິ່ນໄດ້ສັ່ງ**ທຸກຄົນຢູ່ໃນເມືອງຢູດາ** ແລະ**ຜູ້ອາສັຍຢູ່ກຸງເຢຣູຊາເລັມ ພ້ອມດ້ວຍປະໂລຫິດ ແລະພວກຜູ້ປະກາດພຣະທັມ** ໃຫ້ເຂົ້າມາຮ່ວມກັບເພິ່ນໃນການຍົກເອົາພຣະຄຳໄວ້ສູງໃນຊີວິດ.

**ສອງ**, **ກະສັດໄດ້ອ່ານປື້ມແຫ່ງພຣະສັນຍາ**ໂດຍຕົນເອງໃຫ້ຝູງຊົນຟັງ. ໂຢຊີອາ ຕ້ອງການໃຫ້ຄົນເຂົ້າໃຈເຖິງຄວາມສຳພັນ ທີ່ເພິ່ນໄດ້ຍົກພຣະຄຳພຂຶ້ນສູງ. ເຊັ່ນກັນ ຖ້າຜູ້ເປັນພໍ່ແມ່ຕ້ອງນຳພາລູກໃຫ້ຕິດຕາມພຣະເຈົ້າ, ພໍ່ແມ່ຕ້ອງນຳພາໃນການອ່ານພຣະຄັມພີກັບລູກເຕົ້າເປັນປະຈຳ.

**ສາມ**, ຕັດສິນໃຈວ່າ**ຈະຕິດຕາມພຣະເຈົ້າ ແລະຮັກສາພຣະດຳຣັດຂອງພຣະອົງ**. ການຕັດສິນໃຈດັ່ງນັ້ນ ໄດ້ບອກເຖິງການເອົາໃຈໃສ່ຢ່າງແທ້ຈິງ. ເພິ່ນໄດ້ເຮັດຢ່າງນັ້ນຕໍ່ໜ້າປະຊາຊົນ, ໂດຍຢືນຂຶ້ນ**ໃກ້ເສົາ**. ເສົາພຣະວິຫານນັ້ນໄດ້ສ້າງຂຶ້ນໃນສມັຍຂອງກະສັດ ໂຊໂລໂມນ (2 ພຣະບັດຍັດ 6:13). ກະສັດ ໂຢຊີອາ ໄດ້ທຳສັນຍາຢ່າງນີ້ໂດຍຄວາມ**ຕັ້ງໃຈຢ່າງສຸດຈິດສຸດໃຈຂອງເພິ່ນ**.

ສຸດທ້າຍ, ໂຢຊີອາ ບໍ່ໄດ້ສັນຍາພຽງແຕ່ປາກເທົ່ານັ້ນ **ແຕ່ຕັດສິນໃຈດ້ວຍຕົນເອງທີ່ຈະເອົາພຣະຄຳແຫ່ງພຣະສັນຍາໄວ້**. ເພິ່ນໄດ້ປະກາດໃຫ້ຝູງຊົນ ແລະ**ຜູ້ທີ່ໄດ້ຍິນເຫລົ່ານັ້ນກໍເຫັນດີຈະຮ່ວມມືກັບເພິ່ນ**. ປະຊາຊົນເອົາຕົວຢ່າງຂອງຜູ້ນຳ, ຈະແມ່ນພາຍໃນຄອບຄົວ ຫລືພາຍໃນປະເທດ. ໃນເມື່ອພວກເຮົາເອົາພຣະຄຳຂອງພຣະເຈົ້າເປັນມາດຕະຖານໃນຄວາມເຊື່ອ ແລະການປະພຶດແລ້ວ, ຄົນອື່ນກໍຈະເຫັນພຣະເຈົ້າຜ່ານທາງຊີວິດຂອງພວກເຮົາ.

**໓. <u>ລົງມືເຮັດວຽກ</u>** (໒ ກະສັດ ໒໓:4,໒4)

ການຕັດສິນໃຈທີ່ແທ້ຈິງນັ້ນຕ້ອງປະກອບດ້ວຍການກະທຳ. ໂຢຊີອາ ໄດ້ເລີ້ມຕົ້ນປະຕິຮູບທົ່ວປະເທດອິສຣາເອນ, ບອກໃຫ້ຄົນທົ່ວໄປ(4) ແລະບຸກຄົນຕ່າງໆເປັນທາງສ່ວນຕົວ (໒4). ການທີ່ຈະສືບຕໍ່ທາງດ້ານຄວາມເຊື່ອນັ້ນຕ້ອງປະກອບດ້ວຍການປະຕິບັດ. ໂຢຊີອາ ໄດ້ສັ່ງໃຫ້**ມະຫາປະໂລຫິດຕົນໃຫຍ່, ປະໂລຫິດຕ່າງໆ**, ພ້ອມດ້ວຍ**ຜູ້ຮັກສາປະຕູ**ໃຫ້ເຂົາທຳຄວາມສະອາດ**ພຣະວິຫານຂອງພຣະເຈົ້າ**. ມານາເຊັດ ແລະ ອາມອນໄດ້ນັບຖືພຣະ**ບາອານ**ແລະ**ພຣະເຈົ້າຂອງພວກການາອານ** ຢູ່ໃນພຣະວິຫານຂອງພຣະເຈົ້າ. ພະເຈົ້າປອມຂອງພວກການາອານນີ້ເປັນຕົ້ນເຫດໃຫ້ຄົນມີຕັນຫາ ຄວາມຜິດຕ່າງໆ ແລະສໍ້ຣາດບັງຫລວງເກີດຂື້ນ.

ໂຢຊີອາ ໄດ້ອອກຄຳສັ່ງວ່າ**ອັນໃດ**ໄດ້ເຮັດເພິ່ນຖວາຍແກ່ພະເຈົ້າປອມນັ້ນໃຫ້ທຳລາຍຖີ້ມເສັຽ. ສິ່ງເຫລົ່ານີ້ບໍ່ໄດ້ເອົາອອກໜີໄປຊື່ໆ ແຕ່ໄດ້ເອົາໄປ**ເຜົາໄຟ**ເສັຽຢູ່ນອກກຸງເຢຣູຊາເລັມ **ໃນທົ່ງກິດຣຳ**. ໂຢຊີອາ ຍັງໄດ້ເອົາ**ຂີ້ເທົ່າ**ໄປທີ່**ເບັດໂຕ** ເພາະສິ່ງເຫລົ່ານັ້ນເປັນຜົນຮ້າຍໃຫ້ຄົນທັງຫລາຍຕ້ອງສະດຸດ.

ຫລາຍບົດຕໍ່ມາໄດ້ບອກເຖິງເຫດການທີ່ ໂຢຊີອາ ໄດ້ສືບຕໍ່ຊຳຣະໃນແຜ່ນດິ. ເພິ່ນໄດ້**ແຍກອອກສິ່ງທີ່ພຣະເຈົ້າກຽດຊັງ**. ເພິ່ນໄດ້ຫ້າມບໍ່ໃຫ້ຜູ້ໃດໃນທີ່ຊຸມນຸມ ຫລືທີ່ລັບນະມັສການພຣະປອມ ພ້ອມ**ຮູບປັ້ນໃນບ້ານຂອງຕົນ**. ເພິ່ນໄດ້ປະຕິບັດຢ່າງເຄັ່ງຄັດເພື່ອຈະປະຕິບັດຮັກສາຂໍ້ຄຳສັ່ງຂອງພຣະເຈົ້າ ທີ່ໄດ້**ຄົ້ນພົບເຫັນໃນພຣະວິຫານຂອງພຣະເຈົ້າ**. ເຊັ່ນດຽວກັນ ພວກເຮົາຄວນຈະເຮັດໃຫ້ທຸກໆພາກສ່ວນຂອງຊີວິດເຂົ້າໄປຕາມພຣະປະສົງຂອງພຣະເຈົ້າ.

ຄົນທີ່ຕັດສິນໃຈຕໍ່ຄວາມທ່ຽງທັມຕ້ອງຮັກສາຕົນເອງໃຫ້ບໍຣິສຸດໃນທາງຣັດ ແລະທາງສ່ວນຕົວ. ຖ້າພວກເຮົາຢາກໃຫ້ຊາດຂອງຕົນເອງຫັນມາຫາພຣະເຈົ້າ, ກ່ອນອື່ນໝົດໃຫ້ພວກເຮົາປະຕິຮູບຕົນເອງ ແລະຄອບຄົວເສັຽກ່ອນ. ພວກເຮົາຕ້ອງເອົາສະພາບການຕ່າງ ແລະຊີວິດທີ່ນຳໄປຫາການທົດລອງນັ້ນອອກເສັຽ.

**4. <u>ຮູ້ເຫັນວ່າການລົງໂທດຈະມາເຖິງ</u>** ( ໒ ກະສັດ ໒໓:໒໖-໒໗)

ຖ້າພວກເຮົາມີຈິດໃຈຢາກສືບຕໍ່ກັບພຣະເຈົ້າເພື່ອຈະບໍ່ໄດ້ຖືກໂທດນັ້ນ ພວກເຮົາອາດຈະໄດ້ຮັບຄວາມຜິດຫວັງ. ເຖິງແມ່ນ ໂຢຊີອາ ໄດ້ປະຕຮູບຊາດຂອງຕົນເອງ ແຕ່ພຣະເຈົ້າຍັງບໍ່ໄດ້**ຫັນພຣະພັກ**ໜີຈາກຄວາມ**ໂກດຮ້າຍ**ຕໍ່ສູ້ ເມືອງຢູດາ. ການລົງໂທດນັ້ນໄດ້ເລື່ອນຊ້າໄປ ແຕ່ບໍ່ໄດ້ຍົກເວັ້ນ. ໃນເມື່ອກະສັດ ໂຢຊີອາ ໄດ້ເສັຽຊີວິດໃນສົງຄາມສູ້ກັບປະເທດອີຢິບ, ຄົນສ່ວນຫລາຍໄດ້ກັບຄືນໄປເຮັດກັບສິ່ງເກົ່າໆເຫລົ່ານັ້ນ. ພຣະເຈົ້າໄດ້ລົງໂທດຊາດທີ່ເຮັດຜິດບາບອັນເກົ່າຜູ້ຕິດຕາມກະສັດ **ມານາເຊັດ** ພວກເຂົາໄດ້ສູ້ທົນຕໍ່**ຄວາມໂກດຮ້າຍ**ຂອງພຣະເຈົ້າ.

ທີ່ສຸດ ເມືອງ**ຢູດາ**ກໍໄດ້ຮັບໂທດຄືກັບອານາຈັກທາງເໜືອ-**ອິສຣາເອນ**. ການທີ່ຖືກ**ຕັດອອກ**ເປັນໂທດກັມທີ່ໜັກໜ່ວງທີ່ໄດ້ຕັດອອກຈາກສາຍ**ພຣະເນດ**ຂອງພຣະເຈົ້າ. ພວກເຂົາໄດ້ຖືກຕັດອອກຈາກການຮັກສາ, ການປົກຄອງ, ແລະການປະທານສິ່ງຂອງຈາກພຣະເຈົ້າ. ຫລາຍປີຕໍ່ມາ ເມືອງຢູດາກໍກາຍເປັນເມືອງຂື້ນຂອງປະເທດທີ່ບໍ່ນັບຖືພຣະເຈົ້າ. ນີ້ງ, ແມ່ນປະເທດ ອີຢິບ, ຕໍ່ມາ, ປະເທດບາບີໂລນ, ເປີເຊັຽ, ກຣີກ, ແລະໂຣມມັນ.

ເຖິງແມ່ກຸ່ງ**ເຢຣູຊາເລັມ**ເມືອງທີ່ອົງພຣະຜູ້ເປັນເຈົ້າໄດ້**ເລືອກເອົາ**ກໍຍັງໄດ້ຮັບການລົງໂທດເພາະເມືອງຢູດາ. ພຣະວິຫານເປັນຕົວແທນພຣະພັກໃນ**ພຣະນາມ**ຂອງພຣະເຈົ້າອົງບໍຣິສຸດ, ແຕ່ປະຊາຊົນໄດ້ເຮັດໃຫ້ບ່ອນສັກສິດຂອງພຣະອົງເສື່ອມເສັຽ ແລະປະມາດພຣະນາມຂອງພຣະເຈົ້າ. ຜົນທີ່ໄດ້ຮັບ ພຣະເຈົ້າໄດ້ປະກາດວ່າພຣະອົງໄດ້ປະຕິເສດ**ເມືອງນີ້ ແລະວິຫານນີ້**.

ຄວາມບາບຂອງຊາດຈຳເປັນຕ້ອງຖືກຕອບສນອງຈາກສິ່ງສັກສິດ. ພວກເຮົາອາດຄິດວ່າພວກເຮົາຈະໄດ້ພົ້ນຈາກການລົງໂທດຂອງພຣະເຈົ້າ ເພາະຕາມປະວັດສາດແລ້ວປະເທດຂອງພວກເຮົາໄດ້ຮັບພຣະພອນຢ່າງຫລວງຫລາຍ. ຖ້າພຣະເຈົ້າລົງໂທດຄົນທີ່ພຣະອົງໄດ້ເລືອກເອົາໄວ້ ມັນອາດເປັນການອວດໂຕເກີນໄປທີ່ຫວັງວ່າພຣະອົງຈະ

ວິດການລົງໂທດໃນເມື່ອພວກເຮົາປະຕິເສດບໍ່ຍອມຖິ້ມໃຈເກົ່າແລະເອົາໃຈໃໝ່.

ການທີ່ ໂຢຊີອາ ໄດ້ປະຕິຮູບນັ້ນເປັນການສົມຄວນ ເພາະພຣະເຈົ້າເປັນອົງມີຄຸນຄ່າທີ່ຄວນຈະຮັບໃຊ້ບໍ່ວ່າຈະຢູ່ໃນສະພາບໃດໆ. ສິ່ງຕະຕຸ້ນໃຈຢາກໃຫ້ມີການປະຕຣູບທາງຈິດວິນຍານເກີດຂຶ້ນ ພວກເຮົາຄວນເຫັນພ້ອມ ແລະເຮັດເໝືອນກັບກະສັດ ໂຢຊີອາ-ເພື່ອເປັນການຖວາຍພຣະກຽດແດ່ພຣະເຈົ້າເຖິງແມ່ນວ່າຈະເສັຽຄ່າສູງເທົ່າໃດກໍຕາມ.

**ບົດຮຽນໃນຊີວິດ**

ການຟື້ນຟູບໍ່ໄດ້ເລີ້ມຈາກຄົນທັງໂລກ ຫລືໃນປະເທດໃນປະເທດນຶ່ງ ແຕ່ມັນໄດ້ເລີ້ມຈາກຈິດໃຈອັນດຽວ. ທ່ານຍິນດີບໍ່ທີ່ຈະກ້າວຍ່າງຕິດຕາມ ໂຢຊີອາໄປ?

- ຈົ່ງເຮັດໃຫ້ຣາຊອານາຈັກຂອງພຣະເຈົ້າ ແລະຄວາມຊອບທັມຂອງພຣະອົງເປັນສິ່ງທີ່ທ່ານປາຖນາຢາກໄດ້.
- ຈົ່ງເຮັດໃຫ້ນ້ຳພຣະທັຍຂອງພຣະອົງເປັນນຶ່ງໃນການກະຕຸ້ນໃຈໃນການປະພຶດຂອງທ່ານ.
- ຈົ່ງເຮັດໃຫ້ຣັສມີຂອງພຣະເຈົ້າເປັນສິ່ງສຳຄັນທີ່ສຸດໃນຊີວິດຂອງທ່ານ.

ຈຳໄວ້ວ່າທ່ານສາມາດປ່ຽນແປງສັງຄົມຂອງໂລກທີ່ບໍ່ຮູ້ຈັກກັບພຣະເຈົ້າໄດ້ ຖ້າທ່ານຍິນດີທີ່ຈະຈ່າຍຄ່າດ້ວຍຣາຄາອັນແພງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.